**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 101 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 30 JUN 2026

# ແຈ້ງການ

ເຖິງ: - ທ່ານ ອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ
- ທ່ານ ຄະນະບໍດີ ຄະນະພະຍາບານສາດ ມວສ
- ທ່ານ ຜູ້ອຳນວຍການວິທະຍາຄານການແພດກອງທັບ
- ທ່ານ ຫົວໜ້າພະແນກສາທາລະນະສຸກແຂວງ ອຸດົມໄຊ, ຫຼວງພະບາງ, ຊຽງຂວາງ, ວຽງຈັນ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ສາລະວັນ
- ທ່ານ ຜູ້ອຳນວຍການວິທະຍາໄລ ວິທະຍາສາດ ສຸຂະພາບ ຫຼວງພະບາງ, ຊຽງຂວາງ, ສະຫວັນນະເຂດ ແລະ ຈຳປາສັກ
- ທ່ານ ຜູ້ອຳນວຍການໂຮງຮຽນສາທາລະນະສຸກ ອຸດົມໄຊ, ວຽງຈັນ, ຄຳມ່ວນ ແລະ ສາລະວັນ

**ເລື່ອງ: ການກະກຽມ ແລະ ຈັດຕັ້ງສອບເສັງລະດັບຊາດສຳລັບພະຍາບານ ແລະ ຜະດຸງຄັນ ຄັ້ງທີ 7.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ສະບັບເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ການຕົກລົງເຫັນດີ ແລະ ເປັນເອກະພາບ ຂອງຄະນະກຳມະການວິຊາຊີບພະຍາບານ ແລະ ຜະດຸງຄັນ.

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຈະຈັດການສອບເສັງລະດັບຊາດ ສຳລັບພະຍາບານ ແລະ ຜະດຸງຄັນ ຄັ້ງທີ 7 ທີ່ ຄະນະພະຍາບານສາດ ມວສ, ວິທະຍາໄລ ວິທະຍາສາດສຸຂະພາບ ຫຼວງພະບາງ, ຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ ແລະ ໂຮງຮຽນສາທາລະນະສຸກ ອຸດົມໄຊ, ວຽງຈັນ, ຄຳມ່ວນ ແລະ ສາລະວັນ. ເພື່ອເຮັດໃຫ້ການກະກຽມ ແລະ ຈັດຕັ້ງປະຕິບັດການສອບເສັງຄັ້ງນີ້ດຳເນີນໄປຕາມແຜນການ ແລະ ໄດ້ຮັບຜົນດີ ຈຶ່ງຂໍຄວາມຮ່ວມມືມາຍັງທ່ານເພື່ອກະກຽມດັ່ງລຸ່ມນີ້:

1. ແຈ້ງການ ເປີດຮັບຟອມສະໝັກສອບເສັງລະດັບຊາດ ແຕ່ວັນທີ 6 ກໍລະກົດ 2026 ຫາ 30 ກັນຍາ 2026;
2. ກະກຽມແຕ່ງຕັ້ງຄະນະກຳມະການຊີ້ນຳການສອບເສັງ, ຜູ້ປະສານງານ, ຜູ້ຮັບຜິດຊອບຮັບແບບຟອມສະໝັກສອບເສັງ-ອອກບັດເຂົ້າຫ້ອງສອບເສັງ, ຜູ້ອຳນວຍຄວາມສະດວກ ແລະ ກຳມະການຍາມຫ້ອງສອບເສັງ;
3. ກະກຽມສະຖານທີ່ສອບເສັງ: ຫ້ອງສຳລັບກຳມະການຮັບຜິດຊອບການສອບເສັງ ແລະ ຫ້ອງສຳລັບສອບເສັງ ສຳລັບພາກທິດສະດີ (MCQs) ແລະ ພາກປະຕິບັດຕົວຈິງ (OSCEs);
4. ແຈ້ງໃຫ້ພະຍາບານ ແລະ ຜະດຸງຄັນ ທີ່ກຳລັງຈະຮຽນຈົບ ແລະ ຈົບແລ້ວ ທັງພາຍໃນ ແລະ ຕ່າງປະເທດ ແລະ ຜູ້ທີ່ສອບເສັງບໍ່ຜ່ານ ຄັ້ງຜ່ານມາ ໃຫ້ມາລົງທະບຽນ ແລະ ເຂົ້າຮ່ວມການສອບເສັງລະດັບຊາດ ຕາມວັນ ເວລາ ແລະ ສະຖານທີ່ ທີ່ກຳນົດໄວ້;

5. ຜູ້ສະໝັກສອບເສັງສາມາດຮັບແບບຟອມຄໍາຮ້ອງສະໝັກສອບເສັງທາງອອນລາຍໄດ້ທີ່: hpc.gov.la/la/nurse/examination
6. ສໍາລັບ ວັນທີ ແລະ ເວລາ ຮັບບັດ ເຂົ້າຫ້ອງສອບເສັງຈະໄດ້ແຈ້ງການຕື່ມອີກ;
7. ຄ່າລົງທະບຽນສະໝັກສອບເສັງແມ່ນ 250,000 ກີບ/ຄົນ/ຄັ້ງ ຊຶ່ງຕ້ອງຈ່າຍພ້ອມກັບຕອນຍື່ນຟອມຄໍາຮ້ອງສະໝັກສອບເສັງ.
8. ຫຼັງຈາກການສະໝັກສອບເສັງສໍາເລັດ, ຄ່າລົງທະບຽນສະໝັກສອບເສັງທັງໝົດ ໃຫ້ປະສານງານຫາຜູ້ຮັບຜິດຊອບ ຢູ່ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ.

ເຊັນແທນ ປະທານ

ສຈ ດຣ ຈັນເພັງ ທໍາມະວົງ